# ການສຳຫຼວດພາສານຳໃຊ້ຢູ່ໃນລັດມິນີໂຊຕາ

ມິນີໂຊຕາເປັນລັດໜຶ່ງທີ່ມີຄົນນຳໃຊ້ພາສາທີ່ແຕກຕ່າງກັນຫຼາຍກວ່າ 100 ພາສາ. ຄວາມສາມາດນຳໃຊ້ ແລະ ເຂົ້າໃຈຫຼາຍພາສາແມ່ນຖືວ່າເປັນສິ່ງສຳຄັນ ແລະ ໄດ້ປຽບ. ຂໍ້ມູນທີ່ທ່ານສະໜອງໃຫ້ແມ່ນຈະຖືກທາງໂຮງຮຽນນຳໄປໃຊ້ ເພື່ອເບິ່ງວ່າລູກຂອງທ່ານເປັນຄົນມີຄວາມຮູ້ຫຼາຍພາສາບໍ. ຢູ່ໃນລັດມິນີໂຊຕາ, ນັກຮຽນຜູ້ທີ່ມີຄວາມຮູ້ຫຼາຍພາສາອາດຈະມີສິດໄດ້ຮັບເຄື່ອງໝາຍວ່າມີຄວາມຮູ້ຫຼາຍພາສາ (Multilingual Seal) ຕາມການປະເມີນໃນຕໍ່ໜ້າ. ນອກຈາກນັ້ນ, ຂໍ້ມູນທີ່ທ່ານໃຫ້ມາຍັງຈະກຳນົດວ່າ ນັກຮຽນຂອງທ່ານຄວນຈະໄດ້ຮັບການທົດສອບຄວາມຄ່ອງແຄ້ວທາງດ້ານພາສາອັງກິດບໍ. ອີງຕາມຜົນການສອບເສັງ, ນັກຮຽນຂອງທ່ານອາດຈະມີສິດໄດ້ຮັບການສອນການພັດທະນາພາສາອັງກິດ. **ການເຂົ້າເຖິງການສອນແມ່ນກົດໝາຍຂອງລັດຖະບານ ແລະ ຂອງລັດຮຽກຮ້ອງໃຫ້ປະຕິບັດ. ໃນຖານະທີ່ທ່ານເປັນພໍ່ແມ່ ຫຼື ຜູ້ປົກຄອງ, ທ່ານມີສິດປະຕິເສດການສອນໃຫ້ຜູ້ຮຽນພາສາອັງກິດໄດ້ທຸກເວລາ.** ນັກຮຽນທຸກຄົນທີ່ລົງທະບຽນຮຽນແມ່ນຕ້ອງໄດ້ຮັບການສຳຫຼວດພາສານຳໃຊ້ຢູ່ໃນລັດມິນີໂຊຕາໃນລະຫວ່າງການລົງທະບຽນ. ຂໍ້ມູນທີ່ຂໍຢູ່ໃນແບບຟອມນີ້ມີຄວາມສຳຄັນຕໍ່ພວກເຮົາ ເພື່ອທີ່ຈະສາມາດໃຫ້ບໍລິການແກ່ນັກຮຽນຂອງທ່ານໄດ້. ຂໍຂອບໃຈເປັນຢ່າງສູງຕໍ່ຄວາມຊ່ວຍເຫຼືອຂອງທ່ານໃນການປະກອບແບບຟອມການສຳຫຼວດພາສານຳໃຊ້ຢູ່ໃນລັດມິນີໂຊຕາ.

| **ຂໍ້ມູນນັກຮຽນ** | |
|---|---|
| ຊື່ເຕັມຂອງນັກຮຽນ:<br>(ນາມສະກຸນ, ຊື່, ຊື່ກາງ) | ວັນເດືອນປີເກີດ ຫຼື ລະຫັດນັກຮຽນ: |

| | **ໃຫ້ໝາຍຕິກໃສ່ປະໂຫຍກທີ່ບັນຍາຍເຖິງນັກຮຽນຂອງທ່ານໄດ້ດີທີ່ສຸດ:** | **ໃຊ້ຊີ້ບອກພາສາອື່ນໆທີ່ບໍ່ແມ່ນພາສາອັງກິດໃສ່ບ່ອນທີ່ຈັດໃຫ້:** |
|---|---|---|
| 1. ຫ□າອິດລູກຂອງຂ້ອຍຮຽນ: | ___ ພາສາອື່ນທີ່ບໍ່ແມ່ນພາສາອັງກິດ.<br>___ ພາສາອັງກິດ ແລະ ພາສາອື່ນທີ່ບໍ່ແມ່ນພາສາອັງກິດ.<br>___ ພາສາອັງກິດເທົ່ານັ້ນ. | |
| 2. ລູກຂອງຂ້ອຍເວົ້າ: | ___ ພາສາອື່ນທີ່ບໍ່ແມ່ນພາສາອັງກິດ.<br>___ ພາສາອັງກິດ ແລະ ພາສາອື່ນທີ່ບໍ່ແມ່ນພາສາອັງກິດ.<br>___ ພາສາອັງກິດເທົ່ານັ້ນ. | |
| 3. ລູກຂອງຂ້ອຍເຂົ້າໃຈ: | ___ ພາສາອື່ນທີ່ບໍ່ແມ່ນພາສາອັງກິດ.<br>___ ພາສາອັງກິດ ແລະ ພາສາອື່ນທີ່ບໍ່ແມ່ນພາສາອັງກິດ.<br>___ ພາສາອັງກິດເທົ່ານັ້ນ. | |
| 4. ລູກຂ້ອງຂ້ອຍມີການນຳໃຊ້ຕໍ່ເນື່ອງເປັນ: | ___ ພາສາອື່ນທີ່ບໍ່ແມ່ນພາສາອັງກິດ.<br>___ ພາສາອັງກິດ ແລະ ພາສາອື່ນທີ່ບໍ່ແມ່ນພາສາອັງກິດ.<br>___ ພາສາອັງກິດເທົ່ານັ້ນ. | |

**ການໃຊ້ພາສາຢ່າງດຽວບໍ່ໄດ້ລະບຸວ່ານັກຮຽນຂອງທ່ານເປັນຜູ້ຮຽນພາສາອັງກິດ.   ຖ້າໄດ້ມີການບອກໄວ້ເປັນພາສາອື່ນທີ່ບໍ່ແມ່ນພາສາອັງກິດ, ນັກຮຽນຂອງທ່ານຈະໄດ້ຮັບການທົດສອບຄວາມຮູ້ພາສາອັງກິດ.**

| **ຂໍ້ມູນພໍ່ແມ່/ຜູ້ປົກຄອງ** | |
|---|---|
| ຊື່ແຈ້ງຂອງພໍ່ແມ່/ຜູ້ປົກຄອງ: | |
| ລາຍເຊັນຂອງພໍ່ແມ່/ຜູ້ປົກຄອງ: | ວັນທີ: |

* ທຸກຂໍ້ມູນຢູ່ໃນແບບຟອມນີ້ແມ່ນເປັນຄວາມລັບສ່ວນຕົວ. ມັນຈະຖືກນໍາໄປແລກປ່ຽນກັບແຕ່ພະນັກງານເຂດ ຜູ້ທີ່ຕ້ອງການຂໍ້ມູນເພື່ອໃຫ້ບໍລິການນັກຮຽນຂອງທ່ານໃຫ້ໄດ້ດີທີ່ສຸດ ແລະ ຕາມກົດໝາຍກໍານົດໃຫ້ມີການລາຍງານຕໍ່ພະແນກສຶກສາທິການຂອງລັດມິນີໂຊຕາກ່ຽວກັບພາສາທີ່ໃຊ້ຢູ່ໃນບ້ານ ແລະ ການມີສິດໄດ້ຮັບການບໍລິການເທົ່ານັ້ນ. ຢູ່ໃນເຂດ ແລະ ພະແນກສຶກສາທິການຂອງລັດມິນີໂຊຕາ, ຂໍ້ມູນນີ້ແມ່ນຈະບໍ່ຖືກນໍາໄປແລກປ່ຽນກັບບຸກຄົນ ຫຼື ນິຕິບຸກຄົນໃດໆ, ຍົກເວັ້ນແຕ່ຖ້າພວກເຂົາໄດ້ຮັບການອະນຸມັດຕາມກົດໝາຍຂອງລັດ ຫຼື ລັດຖະບານກາງ ເພື່ອໃຫ້ເຂົ້າເຖິງຂໍ້ມູນໄດ້. ການປະຕິບັດຕາມການຂໍຂໍ້ມູນນີ້ແມ່ນປະຕິບັດຕາມຄວາມສະໝັກໃຈ.